# ອາຊະຍາກຳທຳຮ້າຍທຸກໆຄົນ ພວກເຮົາສາມາດຊ່ວຍໄດ້



## ທາງ CalVCB ສາມາດຊ່ວຍຂ້ອຍໄດ້ແນວໃດ?ສາມາດຊ່ວຍຂ້ອຍໄດ້ແນວໃດ?

CalVCB ແມ່ນໂຄງການຂອງລັດທີ່ມຸ່ງໝັ້ນໃຫ້ການຊົດເຊີຍທາງດ້ານການເງິນສຳລັບຄ່າໃຊ້ຈ່າຍກ່ຽວຂ້ອງກັບອາຊະຍາກຳຫຼາຍໆຢ່າງ. ຜູ້ເຄາະຮ້າຍຜູ້ທີ່ໄດ້ຮັບການບາດເຈັບທາງດ້ານຮ່າງກາຍ, ການຂົ່ມຂູ່ຕໍ່ການບາດເຈັບທາງດ້ານຮ່າງກາຍ ຫຼື ການບາດເຈັບທາງດ້ານອາລົມ ທີ່ເປັນຜົນມາຈາກອາຊະຍາກຳຮຸນແຮງໂດຍກົງອາດຈະຜ່ານເງື່ອນໄຂໄດ້ຮັບການຊ່ວຍເຫຼືອ.

CalVCB ເຂົ້າໃຈວ່າ ການຊ່ວຍເຫຼືອທາງດ້ານການເງິນຢ່າງດຽວແມ່ນບໍ່ໄດ້ຈຳກັດບາດແຜຄວາມເປັນປວດ ຫຼື ການທຸກທໍລະມານທາງດ້ານອາລົມຂອງການຕົກເປັນຜູ້ເຄາະຮ້າຍ, ແຕ່ເຊື່ອວ່າ ມັນສາມາດບັນເທົາຄວາມກົດດັນທີ່ເພີ່ມເຂົ້າຈຳນວນໜຶ່ງ ທີ່ເກີດຂຶ້ນມາຈາກຜົນຂອງອາຊະຍາກຳ.



## ມີຄ່າໃຊ້ຈ່າຍໃດແດ່ທີ່ CalVCB ສາມາດຊ່ວຍຈ່າຍໄດ້?

CalVCB ສາມາດຊ່ວຍຈ່າຍຄ່າໃຊ້ຈ່າຍກ່ຽວຂ້ອງກັບອາຊະຍາກຳໄດ້ໃນລະດັບກວ້າງຂວາງເຊັ່ນ: ຄ່າໃຊ້ຈ່າຍທາງການແພດ, ການປິ່ນປົວສຸຂະພາບຈິດ ແລະ ການຍົກຍ້າຍ.

ຢູ່ໃນສະຖານະການສະເພາະ, CalVCB ສາມາດໃຫ້ການຊ່ວຍເຫຼືອດ້ານການເງິນສຸກເສີນໄດ້ພາຍໃນ 30 ວັນ. ຕົວຢ່າງ, ທ່ານອາດຈະມີເງື່ອນໄຂໄດ້ຮັບ ຖ້າທ່ານມີຄວາມສ່ຽງຕໍ່ຄວາມປອດໄພສ່ວນຕົວຂອງທ່ານ ແລະ ທ່ານຈຳເປັນຕ້ອງໄດ້ຍົກຍ້າຍອອກ.



## ຂ້ອຍຈຳເປັນຕ້ອງໄດ້ສົ່ງໃບຄຳຮ້ອງກັບ CalVCB ເມື່ອໃດ?

- ຜູ້ໃຫຍ່ຕ້ອງຍື່ນໃບຄຳຮ້ອງພາຍໃນສາມປີທີ່ເກີດອາຊະຍາກຳ.
- ຜູ້ເຄາະຮ້າຍບໍ່ທັນພົ້ນກະສຽນອາຍຸຕ້ອງຍື່ນໃບຄຳຮ້ອງພາຍໃນວັນມີອາຍຸຄົບ 21 ປີເຕັມ. ຖ້າອາຊະຍາກຳແມ່ນການກະທຳຜິດທາງເພດ, ໃບຄຳຮ້ອງຕ້ອງສົ່ງພາຍໃນວັນຄົບຮອບວັນເກີດ 28 ປີເຕັມຂອງຜູ້ເຄາະຮ້າຍ.



## ຂ້ອຍຈະຮູ້ໄດ້ແນວໃດວ່າ ຂ້ອຍມີສິດໄດ້ຮັບການຊ່ວຍເຫຼືອຫຼືບໍ່?

CalVCB ສາມາດຊ່ວຍຜູ້ເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າໄດ້ ເມື່ອມີອາຊະຍາກຳເກີດຂຶ້ນຢູ່ໃນລັດຄາລິຟໍເນຍ. CalVCB ຍັງສາມາດຊ່ວຍໃຫ້ຜູ້ດຳລົງຊີວິດຢູ່ໃນລັດຄາລິຟໍເນຍຜູ້ທີ່ຕົກເປັນເຫຍື່ອໃນຂະນະທີ່ຢູ່ໃນລັດອື່ນ ຫຼື ປະເທດອື່ນໄດ້.

CalVCB ຍັງອາດຈະສາມາດຊ່ວຍບຸກຄົນອື່ນທີ່ໄດ້ຮັບຜົນກະທົບຈາກອາຊະຍາກຳໂດຍກົງນຳອີກ.



## ຂ້ອຍຈະໄດ້ຮັບການຊ່ວຍເຫຼືອຢູ່ໃນທ້ອງຖິ່ນໄດ້ແນວໃດ?

ຕິດຕໍ່ຫາຜູ້ສະໜັບສະໜູນຂອງສູນຊ່ວຍເຫຼືອພະຍານຜູ້ເຄາະຮ້າຍໃນທ້ອງຖິ່ນຂອງທ່ານ ເພື່ອຂໍຄວາມຊ່ວຍເຫຼືອໃນການຍື່ນໃບຄຳຮ້ອງຂອງທ່ານ.

ຜູ້ໃຫ້ການສະໜັບສະໜູນສາມາດຊ່ວຍທ່ານກວດເບິ່ງລະບົບຍຸຕິທຳອາຊະຍາກຳ ໂດຍການໃຫ້ຂໍ້ມູນກ່ຽວກັບຊັບພະຍາກອນ ແລະ ການບໍລິການທີ່ມີຢູ່ໃນຄາວຕີ້ຂອງທ່ານ. ເຂົ້າເບິ່ງໜ້າການຊ່ວຍເຫຼືອໃນທ້ອງຖິ່ນຂອງພວກເຮົາໄດ້ທີ່: **victims.ca.gov/victims/localhelp.aspx**



## ຂ້ອຍສາມາດຮຽນຮູ້ເພີ່ມເຕີມກ່ຽວກັບ CalVCB ໄດ້ແນວໃດ?

ໂທຫາພວກເຮົາໄດ້ທີ່: **800.777.9229**
ເຂົ້າເບິ່ງເວັບໄຊທ໌ຂອງພວກເຮົາໄດ້ທີ່: **victims.ca.gov**
ສົ່ງອີເມວຫາພວກເຮົາໄດ້ທີ່ທີ່: **info@victims.ca.gov**

CALIFORNIA CalVCB VICTIM COMPENSATION BOARD

### CalVCB ສາມາດຊ່ວຍຜູ້ເຄາະຮ້າຍຈາກອາຊະຍາກຳໄດ້ຄື:

- ການທຳຮ້າຍຮ່າງກາຍ
- ການທາລຸນເດັກ
- ຄວາມຮຸນແຮງໃນຄອບຄົວ
- ການຂັບຂີ່ໃນຂະນະທີ່ມຶນເມົາ
- ການທາລຸນຜູ້ສູງອາຍຸ
- ອາຊະຍາກຳຄວາມກຽດຊັງ
- ຄາດຕະກຳ
- ການຄ້າມະນຸດ
- ການລ່ວງລະເມີດທາງອອນລາຍ
- ການປຸ້ນຈີ້
- ການລ່ວງລະເມີດທາງເພດ
- ການສະກົດຮອຍ
- ການຄາດຕະກຳດ້ວຍພາຫະນະ

### CalVCB ສາມາດຊ່ວຍຈ່າຍໄດ້ຄື:

- ການທຳຄວາມສະອາດບ່ອນເກີດອາຊະຍາກຳ
- ຄ່າໃຊ້ຈ່າຍການໃນງານສົບ ແລະ ການສົ່ງສະການ
- ການດັດແປງບ້ານ ຫຼື ພາຫະນະສຳລັບຜູ້ເຄາະຮ້າຍທີ່ພິການ
- ການເສຍລາຍໄດ້
- ຄ່າໃຊ້ຈ່າຍການປິ່ນປົວທາງການແພດ ແລະ ແຂ້ວ
- ການບໍລິການດູແລສຸຂະພາບຈິດ
- ການຍົກຍ້າຍ
- ຄວາມປອດໄພທີ່ຢູ່ອາໄສ

ມີຂໍ້ຈຳກັດວ່າ ສາມາດຈ່າຍໃຫ້ການສູນເສຍແຕ່ລະອັນໄດ້ເທົ່າໃດ.

Lao | rev. 9.1.2016